**CAPAA**

**WASHINGTON STATE COMMISSION ON ASIAN PACIFIC AMERICAN AFFAIRS**

**ຄະນະກຳມະການລັດວໍຊິງຕັນວ່າດ້ວຍວຽກງານຊາວອາເມລິກັນ ເຊື້ອສາຍອາຊີປາຊີຟິກ**

ການປັບປຸງຊີວິດການເປັນຢູ່ຂອງຊາວອາເມລິກັນເຊື້ອສາຍອາຊີປາຊີຟິກ

**ຄະນະກຳມະການວ່າດ້ວຍວຽກງານຊາວອາເມລິກັນເຊື້ອສາຍອາຊີປາຊີຟິກ ແມ່ນໜ່ວຍງານຂັ້ນລັດທີ່ມີຄະນະກຳມະການທີ່ປຶກສາ 12 ທ່ານ, ເຊິ່ງໄດ້ຮັບການແຕ່ງຕັ້ງໂດຍຜູ້ວ່າການລັດ ໃຫ້ເປັນກະບອກສຽງສຳລັບຊຸມຊົນຊາວອາເມລິກັນເຊື້ອສາຍອາຊີປາຊີຟິກທີ່ຫຼາກຫຼາຍ.**

## ບົດບາດຂອງພວກເຮົາ

ພາລະກິດຂອງພວກເຮົາແມ່ນການປັບປຸງຊີວິດການເປັນຢູ່ຂອງຊາວອາເມລິກັນເຊື້ອສາຍອາຊີປາຊີຟິກໃນລັດວໍຊິງຕັນ. ພວກເຮົາເຮັດວຽກຮ່ວມກັບຊຸມຊົນ ແລະ ບັນດາຜູ້ນຳໃນລັດຂອງພວກເຮົາເພື່ອແກ້ໄຂບັນຫາຕ່າງໆ ແລະ ນຳເອົາການປ່ຽນແປງທີ່ດີ ແລະ ວິທີແກ້ໄຂບັນຫາໄລຍະຍາວມາສູ່ຊຸມຊົນ. ພະນັກງານ ແລະ ຄະນະກຳມະການຂອງພວກເຮົາ:

- ຮັບປະກັນວ່າມີການຮັບຟັງສຽງຂອງຊຸມຊົນຢູ່ໃນລັດຖະບານຂັ້ນລັດ.
- ແຈ້ງບອກຊຸມຊົນກ່ຽວກັບກົດໝາຍ ແລະ ນະໂຍບາຍທີ່ມີຜົນກະທົບຕໍ່ການເປັນຢູ່ຂອງເຂົາເຈົ້າ.
- ສົ່ງເສີມນະໂຍບາຍ ແລະ ການບໍລິການທີ່ສະໜັບສະໜູນຄວາມຕ້ອງການສະເພາະຂອງຊຸມຊົນຂອງພວກເຮົາ.

## ຂົງເຂດຈຸດສຸມ

- **ສິດທິມະນຸດ ແລະ ຄວາມຍຸຕິທຳ:** ສົ່ງເສີມຄວາມສະເໝີພາບດ້ານເຊື້ອຊາດ ແລະ ສິດທິພົນລະເມືອງ ລວມທັງຄວາມຍຸຕິທຳສຳລັບຜູ້ເຂົ້າເມືອງ ແລະ ຜູ້ລີ້ໄພ.
- **ການສຶກສາ:** ພັດທະນາຍຸດທະສາດຕ່າງໆເພື່ອຮັບປະກັນໃຫ້ເດັກທຸກຄົນມີການເຂົ້າເຖິງການສຶກສາທີ່ມີຄຸນນະພາບທີ່ໃຫ້ຄວາມສຳຄັນຕໍ່ກັບຄວາມຫຼາກຫຼາຍ ແລະ ການເຄົາລົບເຊິ່ງກັນແລະກັນ.
- **ການບໍລິການດ້ານສຸຂະພາບ ແລະ ມະນຸດ:** ສົ່ງເສີມວິທີການແກ້ໄຂບັນຫາເພື່ອປັບປຸງການເຂົ້າເຖິງການບໍລິການດ້ານສຸຂະພາບ ແລະ ມະນຸດທີ່ມີຄຸນນະພາບ, ລາຄາບໍ່ແພງ ແລະ ມີຄວາມເໝາະສົມທາງດ້ານວັດທະນະທຳ.
- **ການພັດທະນາເສດຖະກິດ:** ເພີ່ມໂອກາດໃນການເຂົ້າຮ່ວມໃນການດຳເນີນທຸລະກິດ ແລະ ກຳລັງແຮງງານ.




## ຄະນະກຳມະການ

ບັນດາຄະນະກຳມະການປະຕິບັດໜ້າທີ່ໄລຍະສາມປີ ແລະ ເຂົ້າຮ່ວມກອງປະຊຸມຫ້າຄັ້ງຕໍ່ປີ. ພວກເຂົາສ້າງຄວາມສຳພັນໃນຊຸມຊົນຂອງເຂົາເຈົ້າ ແລະ ເຮັດວຽກເພື່ອຊອກຫາວິທີແກ້ໄຂບັນຫາໂດຍການຈັດກອງປະຊຸມຕ່າງໆໃນຊຸມຊົນ, ສະໜັບສະໜູນການຮ່ວມມືກັນ, ເຮັດໜ້າທີ່ໃນຄະນະກຳມະການ, ກວດສອບບັນຫາ ແລະ ໃຫ້ຄຳແນະນຳແກ່ຜູ້ເຮັດການຕັດສິນບັນຫາ.

## ປະຫວັດຄວາມເປັນມາຂອງພວກເຮົາ

ຊາວອາເມລິກັນເຊື້ອສາຍອາຊີປາຊີຟິກເຄີຍປະສົບກັບການເລືອກປະຕິບັດໃນຕະຫຼອດປະຫວັດສາດຂອງລັດ ແລະ ທົ່ວປະເທດຂອງພວກເຮົາ ແລະ ສືບຕໍ່ປະສົບກັບອຸປະສັກຕ່າງໆໃນການເຂົ້າເຖິງການບໍລິການຂອງລັດຖະບານ. ໂດຍສ້າງຕັ້ງຂຶ້ນໃນປີ 1972 ໂດຍນັກຕໍ່ສູ້ເພື່ອຊຸມຊົນ ແລະ ອອກເປັນກົດໝາຍໂດຍສະພານິຕິບັນຍັດໃນປີ 1974, ຄະນະກຳມະການ CAPAA ໄດ້ເອົາໃຈໃສ່ເຮັດວຽກເພື່ອປັບປຸງການສົ່ງເສີມສະໜັບສະໜູນ, ການສຶກສາຊຸມຊົນ, ການໃຫ້ບໍລິການຢູ່ໃນຊຸມຊົນ ແລະ ການຮ່ວມມືເພື່ອສະໜັບສະໜູນຊ່ວຍເຫຼືອຊຸມຊົນຂອງພວກເຮົາ.

## ວິທີເຂົ້າມາມີສ່ວນຮ່ວມ

- ພົບກັບຄະນະກຳມະການໃດໜຶ່ງເພື່ອໂອ້ລົມບັນຫາຕ່າງໆ.
- ເຂົ້າຮ່ວມກອງປະຊຸມຄະນະກຳມະການ.
- ສະໝັກເຂົ້າເຮັດວຽກເປັນຄະນະກຳມະການ.
- ລົງທະບຽນຮັບເອົາຈົດໝາຍຂ່າວທາງອີເມວຜ່ານເວັບໄຊຂອງພວກເຮົາ.

## ຕິດຕໍ່ຫາພວກເຮົາ

CAPAA.WA.GOV
CAPAA@CAPAA.WA.GOV
360.725.5667
FACEBOOK.COM/WACAPAA